# ຂໍໃຫ້ພາກັນເໝີດໜີ້ ເໝີດບາບ ເໝີດກັມ...

ຂໍໃຫ້ພາກັນເໝີດໜີ້ ເໝີດບາບ ເໝີດກັມ ເໝີດເວນ ເໝີດເຄາະ ເໝີດຊວຍ ເໝີດໂຣກໂລຄາພະຍາດ ເໝີດສະໜຽດຈັງໄລ ເໝີດພິດ ເໝີດພັຍ ເໝີດຈັງໄຣທັງຫຼາຍທັງປວງ ໂທດທັງຫຼາຍທັງປວງ ຢ່າເຫຼືອຢ່າຄ້າງ! ຢ່າມີເຄາະ ຢ່າມີໂສກ ຢ່າມີໂຣກໂລຄາພະຍາດບຽດບຽນ! ຢ່າມີທຸກຂ໌ ຢ່າມີຄວາມຍາກລໍາບາກ! ຢ່າມີຄໍາວ່າ: **"ທົນທຸກຂ໌ທໍລະມານ"!** ຢ່າມີນໍ້າຕາໄຫຼອອກມາ ດ້ວຍຄວາມທຸກຂ໌! ຢ່າທຸກຂ໌ໜັກ ຢ່າທຸກຂ໌ຫຼາຍ! ຢ່າທຸກຂ໌ໜ້ອຍ ທຸກຂ໌ໜ້ອຍນຶ່ງກໍຢ່າມີເລີຍ! ໃຫ້ເກີດຮູ້ ໃຫ້ເກີດເຂົ້າໃຈໃນເລື້ອງຊີວິດ ໃນເລື້ອງຄວາມບໍ່ທ່ຽງ ໃນເລື້ອງຄວາມປ່ຽນແປງ ໃນເລື້ອງຂອງໂລກໜ່ອຍນີ້ ເລື້ອງສິ້ນສຸດບໍ່ເປັນຈັກເທື່ອ ເລື້ອງໆເກົ່າ ເລື້ອງໆໃໝ່ ເລື້ອງນັ້ນເລື້ອງນີ້ ເລື້ອງເຈົ້າເລື້ອງຂ້ອຍ ຂໍໃຫ້ເຂົ້າໃຈວ່າ ພາວະຮ່າງກາຍຂອງເຮົານີ້ເປັນພຽງແຕ່ຫຸ່ນຮູບປັ້ນເທົ່ານັ້ນເອງ ແລະເປັນພຽງແຕ່ຊີ້ນສ່ວນຈາກພໍ່ຈາກແມ່ ສ່ວນພໍ່ແມ່ໄດ້ແບ່ງໃຫ້ແບ່ງໃຫ້ຜູ້ເປັນລູກ ລູກທັງຫຼາຍທັງປວງ ລູກທຸກຄົນທຸກຄົນຢູ່ໃນໂລກໜ່ອຍນີ້ ລູກທັງຫຼາຍນໍາກັນ, ຫຼາຍເຫຼືອເກີນ ລູກພຣະ ລູກພໍ່ພຣະ ລູກແມ່ພຣະ ຈໍາເປັນຕ້ອງໄດ້ແບ່ງກັນອອກ ເພາະວ່າທາດເຂົາພາແບ່ງທາດພາແບ່ງກໍຕ້ອງໄດ້ແບ່ງ ແບ່ງໄປຕາມໜ້າທີ່ ວັນນີ້ໄດ້ຍິນໄດ້ຟັງແລ້ວ ຂໍໃຫ້ແກ້ວຈິດດວງໃສໆ ທີ່ເຄີຍມີ ທີ່ເຄີຍມີມາແຕ່ກ່ອນ ໃສແລ້ວຈິ່ງເຂົ້າມາຢູ່ກາຍໄດ້ ໃສແລ້ວງາມແລ້ວ ຈິ່ງໄດ້ເຂົ້າມາຢູ່ກາຍ ກາຍຂອງຄົນ ກາຍຂອງມະນຸດ ແຕ່ວ່າເວລານີ້ ເລີ້ມເສົ້າເລີ້ມເຫງົາ ເພາະວ່າມີຂີ້ສະໜິມອັດ ປິດບັງໄວ້ ສະໜິມໃນໂຕຄົນໆ ນຶ່ງບໍ່ຫຼາຍ ແຕ່ມັນເປັນເລື້ອງມະຫາຫຼາຍ ເພາະວ່າມີການຂະຫຍາຍອອກ ຢາກບອກໃຫ້ທຸກຄົນຮູ້ ໃຫ້ທຸກຄົນເຂົ້າໃຈ ເຂົ້າໃຈໄດ້ນໍາກັນ ເຂົ້າໃຈແບບເຂົ້າໃຈເຖິງ ເຖິງພຣະອົງຄ໌ແທ້ເຖິງພຣະອົງຄ໌ຈິງພຣະອົງຄ໌ຈິງຄືສິ່ງທີ່ຕາຍບໍ່ເປັນ ພຣະອົງຄ໌ແທ້ຄືສິ່ງທີ່ ເອີ້ນວ່າ **"ພຣະທິພ"**

ຈົ່ງຮັກສາບຸນ ຮັກສາບຸນໄວ້ ຮັກສາບຸນໄວ້ນໍາກັນ ຈົ່ງພະຍາຍາມລ້າງກາຍວາຈາໃຈໃຫ້ສະອາດ ໃຫ້ບໍລິສຸດ ໃຫ້ບໍລິບູນ ໃຫ້ກຸ່ງໝົດຈິດ ໃຫ້ໄດ້ເອີ້ນວ່າ **"ແກ້ວມະນີແວ້ວໄດ້"** ແວ້ວໄດ້ຄືແບບນີ້ ພຣະແມ່ແກ້ວທາງນອກພຽງແຕ່ສົ່ງສຽງໃຫ້ໄດ້ຍິນ ແຕ່ແມ່ພຣະແກ້ວແວ້ວຢູ່ໃນ ແວ້ວໃສ່ໃຈ ແລ້ວບອກວ່າ **"ທາຍາຖພຣະພຸທທະສາສນາທັງຫຼາຍເອີຍ! ຈົ່ງພາກັນຮັກສາບຸນເຖີດ! ຮັກສາຄຸນງາມຄວາມດີ ຮັກສາສະຕິ ປັນຍາໄວ້ ຮັກສາຄວາມເປັນພຣະ ຮັກສາມາລະຍາດ ຮັກສາຄຸນສົມບັດ ຮັກສາວາຈາ ຮັກສາກາຍ ຮັກສາໃຈ ຮັກສາໄວ້ ໃຫ້ໄດ້ຄວາມບໍລິສຸດ ພຣະຢູ່ໃນຈິ່ງຊີໄດ້ໂອກາດ ພຣະຢູ່ໃນຈິ່ງຊີໃຫ້ບຸນໃຫ້ພອນໄດ້ ພຣະຢູ່ໃນກາຍເຈົ້າຂອງ ຢູ່ໃນກາຍເຈົ້າຂອງມີພຣະ ມີພຣະແທ້ໆ ມີພຣະຈິງໆ!"**

ວັນທີ **12/12/2015**, ເວລາ **17:20-17-43** ໂມງ, ໃຊ້ເວລາຈົດຂຽນໄວ້ **23** ນາທີ

**ຜູ້ຮັບຈົດຂຽນ ແລະຕີພິມໄວ້ຈາກແມ່ພຣະ ດຣ. ມະນີສົດ ແກ້ວດາລາ**

ໂທລະສັບ:**(+856-20) 2222 8489,** E-mail: manisothk@gmail.com;